ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

- ວິເຄາະ
- PA ໂຮງ...
10/2 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 06 /ທກ
ນະຄອນຫຼວງວຽງຈັນ, ວັນທີ: 06 FEB 2015

ສານັກງານ ຄຄຊ
ສົ່ງ
ເລກທີ...147...
ວັນທີ 09 FEB 2015
ໂທລະສັບ 021 217770

**ລາຍງານການເຄື່ອນໄຫວປະຈໍາອາທິດ**
**26/01/2015 ຫາ 30/01/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກການກໍ່ສ້າງບ້ານຂອງສະຫະລັດ ໃນເດືອນ 12/2014 ເພີ່ມຂຶ້ນ 1,08 ລ້ານຫຼັງ ຈາກ 1,04 ລ້ານຫຼັງ ໃນເດືອນຜ່ານມາ, ຈໍານວນຜູ້ຂໍສະຫວັດດີການວ່າງງານປະຈໍາອາທິດທີ 17/01/2015 ຫຼຸດລົງ ເປັນ 306.000 ຄົນ ຈາກ 316.000 ຄົນ. ໃນຂະນະທີ່, ທະນາຄານກາງເອີຣົບ ECB ປະກາດໃຊ້ມາດຕະການຜ່ອນຄາຍທາງດ້ານການເງິນ ດ້ວຍການຊື້ພັນທະບັດຈໍານວນ 60 ຕື້ເອີໂຣ/ເດືອນ ຊຶ່ງສູງກ່ວາທີ່ນັກວິເຄາະຄາດວ່າຈະເພີ່ມຂຶ້ນ 50 ຕື້ເອີໂຣ/ເດືອນ, ໂດຍຕັ້ງເປົ້າໝາຍເງິນເຟີ້ໃຫ້ຢູ່ໃນລະດັບ 2% ແລະ ຈະຍັງຄົງຮັກສາລະດັບອັດຕາດອກເບ້ຍພື້ນຖານໄວ້ຢູ່ທີ່ລະດັບ 0,05%. ສ່ວນເງິນບາດ, ເປໂຊ ແລະ ຣູເປັຍ ແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກການຂະຫຍາຍຕົວທາງດ້ານເສດຖະກິດຂອງໄທຂະຫຍາຍຕົວ 0,6% ໃນໄຕມາດ 3/2014 ຈາກ 0,4% ໃນໄຕມາດຜ່ານມາ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 20/01/2015 | ອາທິດນີ້ 27/01/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,1583 | 1,1258 | 2,88% |
| ໂດລາ/ເຢນ | 118,17 | 118,23 | -0,05% |
| ໂດລາ/ບາດ | 32,69 | 32,55 | 0,43% |
| ໂດລາ/ເປໂຊ | 44,63 | 44,10 | 1,20% |
| ໂດລາ/ຣູເປັຍ | 12.612,11 | 12.480,56 | 1,05% |
| ໂດລາ/ໂດລາສິງກະໂປ | 1,3374 | 1,3432 | -0,43% |
| ໂດລາ/ຢວນ | 6,2152 | 6,2482 | -0,53% |

**1.2 <u>ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ</u>**

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 4,60% ຈາກ 47,33 ໂດລາ/ບາເຣວ ມາເປັນ 45,16 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນປະຈຳອາທິດທີ 16/01/2015 ຂອງສະຫະລັດເພີ່ມຂຶ້ນ 10,1 ລ້ານບາເຣວ ແລະ ຄັງສຳຮອງນ້ຳມັນທາງການຄ້າຂອງສິງກະໂປປະຈຳອາທິດທີ 21/01/2015 ເພີ່ມຂຶ້ນ 1,6 ລ້ານບາເຣວ;

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,08% ຈາກ 1.280,01 ໂດລາ/ອອນ ມາເປັນ 1.278,93 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັບກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາໃນຕະຫຼາດສາກົນ.

**2. <u>ສະພາບເສດຖະກິດເງິນຕາພາຍໃນ</u>**

**2.1 <u>ສະພາບອັດຕາແລກປ່ຽນພາຍໃນ</u>**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,16% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,11% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,16% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,16% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,40% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,20% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,20% ສຳລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,38% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 14-19/01/2015 | | | ອາທິດນີ້ 20-27/01/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| <u>ອັດຕາທະຄານ</u>[1] | | | | | | | | | |
| ໂດລາ | 8.104,70 | 8.134,94 | 8.123,25 | 8.089,43 | 8.125,95 | 8.110,49 | 0,19% | 0,11% | 0,16% |
| ບາດ | 250,12 | 251,20 | 250,39 | 250,15 | 251,25 | 250,78 | -0,01% | -0,02% | -0,16% |
| <u>ອັດຕາຕະຫຼາດ</u> | | | | | | | | | |
| ໂດລາ | 8.112,53 | 8.160,00 | 8.136,27 | 8.105,02 | 8.150,00 | 8.127,51 | 0,09% | 0,12% | 0,11% |
| ບາດ | 249,41 | 251,10 | 250,25 | 249,78 | 251,53 | 250,65 | -0,15% | -0,17% | -0,16% |
| ຜົດຕ່າງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,10% | 0,31% | 0,16% | 0,19% | 0,30% | 0,21% | | | |
| ບາດ | -0,28% | -0,04% | -0,05% | -0,15% | 0,11% | -0,05% | | | |

**2.2 <u>ສະພາບຖານເງິນຕາ ແລະ ປະລິມານເງິນ M2</u>**

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,14% ທຽບໃສ່ວັນທີ 23/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 53,13%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,06% ເມື່ອທຽບໃສ່ວັນທີ 23/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 26,25%.

**2.3 <u>ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ</u>**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 21-27/01/2015) ເຫັນວ່າ ທຫກ ຂາຍໂດລາສຸດທິ 23,77 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 34,33 ລ້ານໂດລາ ແລະ ຂາຍໂດລາໄດ້ 58,10 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 181,81 ລ້ານບາດ (ໃນນີ້ ຊື້ບາດໄດ້ 424,55 ລ້ານບາດ ແລະ ຂາຍບາດໄດ້ 606,37 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 0,71% ແລະ ຫຼຸດລົງ 0,68% ສຳລັບເງິນບາດ;

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 7,39 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 138,54 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 27,55 ລ້ານໂດລາ ແລະ ຊື້ບາດສຸດທິ ຈຳນວນ 71 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 15,54 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 172,51 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 14-20/01/2015 | | ອາທິດນີ້ 21-27/01/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 14,31 | 206,97 | 18,04 | 244,27 | 26,09% | 18,02% |
| - ທ/ຄທຸລະກິດອື່ນໆ | 38,52 | 175,41 | 16,29 | 180,29 | -57,71% | 2,78% |
| ລວມຊື້: | 52,83 | 382,38 | 34,33 | 424,55 | -35,01% | 11,03% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 19,25 | 185,26 | 35,21 | 209,26 | 82,96% | 12,95% |
| - ທ/ຄທຸລະກິດອື່ນໆ | 21,01 | 470,32 | 22,88 | 397,11 | 8,90% | -15,57% |
| ລວມຂາຍ: | 40,26 | 655,58 | 58,10 | 606,37 | 44,31% | -7,51% |
| ຊື້-ຂາຍສຸດທິ ທທກ | 12,57 | -273,20 | -23,77 | -181,81 | -289,13% | -33,45% |
| ຜິດດ່ຽງ ຊື້-ຂາຍ | 23,79 | -71,45 | -69,23 | -42,82 | -930,75% | 286,42% |
| ມູນຄ່າການຊື້-ຂາຍ | 93,09 | 1,037,96 | 92,43 | 1,030,92 | -0,71% | -0,68% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 71,00 | | |
| - ທຫລ ຂາຍໃຫ້ ທທກ | 6,56 | 118,00 | 27,55 | 0,00 | | |
| ຊື້-ຂາຍສຸດທິ ທຫລ | -6,56 | -118,00 | -27,55 | 71,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 8,13 | 150,54 | 7,39 | 138,54 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 1,03 | 11,20 | 20,43 | 172,51 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,55 | 1,63 | 4,89 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 0,49 | 9,57 | 15,54 | 172,51 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 01/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,20% ຫຼຸດລົງ 0,20% ຈາກ 2,40% ໃນເດືອນ 12/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 32,2 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 29,3% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 774 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 8,19% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 592,13 ຕື້ກີບ ຫຼຸດລົງ 19,04% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (23-29/01/2015) ມີຈໍານວນ 1,319 ຄັ້ງ ໂດຍມີມູນຄ່າ 688,96 ຕື້ກີບ ເພີ່ມຂຶ້ນ 99,75% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 435 ຄັ້ງ.

**2,7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.408,50 ຈຸດ ຫຼຸດລົງ 0,36% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 266.347 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,64 ຕື້ກີບ ຫຼຸດລົງ 50,22% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 60,46% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.999 ກີບ/ຮຸ້ນ ຫຼຸດລົງ 18 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 76.262 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 533,77 ລ້ານກີບ ເພີ່ມຂຶ້ນ 19,35% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 64,71% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,49%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.051 ກີບ/ຮຸ້ນ ຫຼຸດລົງ 33 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 112.985 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 796,68 ລ້ານກີບ ຫຼຸດລົງ 69,50% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 75,52% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,27%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.400 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 100 ກີບ/ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,94 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.052 ກີບ/ຮຸ້ນ ຫຼຸດລົງ 40 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 77.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 311,98 ລ້ານກີບ ເພີ່ມຂຶ້ນ 28,91% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 14,44% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການມາພົບປະ ແລະ ເຮັດວຽກຮ່ວມກັບກົມນະໂຍບາຍເງິນຕາ ຂອງສະຖາບັນ Japan Center for International finance (JCIF), ປະເທດ ຍີ່ປຸ່ນ;
- ສໍາເລັດພິທີມອບຮັບເຄື່ອງອຸປະກອນຮັບໃຊ້ໃຫ້ ໜ່ວຍງານຕ້ານການຟອກເງິນ ຂອງສະຖານທູດອັງກິດ, ປະຈໍາ ສປປ ລາວ ທີ່ ທຫລ;
- ສໍາເລັດການຮ່າງພາລະບົດບາດໃຫ້ແກ່ ຄະນະຮັບຜິດຊອບໂຄງການ ການຄຸ້ມຄອງໂຄງການ AFP;
- ສໍາເລັດຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຫ້ອງການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃນເຂດຊົນນະບົດ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຈັດກອງປະຊຸມກ່ຽວກັບວຽກງານການພັດທະນາ ແລະ ການບໍລິການເຄືອຂ່າຍຕົວແທນ ໃຫ້ມີປະສິດທິພາບໃນ ສປປ ລາວ ທີ່ໂຮງແຮມອ່າງຄຳ.

III. **ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບ ການຕ້ານອາຊະຍາກຳປ່າໄມ້, ສັດນ້ຳ, ສັດປ່າ ແລະ ການຕ້ານການຟອກເງິນ ຊຶ່ງຈະໄດ້ຈັດຂຶ້ນທີ່ ແຂວງຈຳປາສັກ;
- ສືບຕໍ່ຄົ້ນຄວ້າ: ❶ ເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2; ❷ ສືບຕໍ່ຄົ້ນຄວ້າຮ່າງລະບຽບ RTGS ວ່າດ້ວຍ: ສິດ ແລະ ໜ້າທີ່ຂອງຜູ້ເຂົ້າຮ່ວມລະບົບ RTGS, ❸ ສືບຕໍ່ຄົ້ນຄວ້າການກຳນົດລະບຽບເງິນເອເລັກໂທຣນິກ (E-Money) ອີງຕາມພະລາດຊະດີກາວ່າດ້ວຍການຄວບຄຸມດູແລ ແລະ ທຸລະກິດບໍລິການຊຳລະເງິນທາງເອເລັກໂທຣນິກ ພ.ສ 2551 ຂອງປະເທດໄທ, ❹ ສັງລວມຜົນການຄົ້ນຄວ້າ ມາດຕະຖານບັນຊີສາກົນ IFRS ທັງໝົດເພື່ອລາຍງານທ່ານຜູ້ວ່າການ ທຫລ ແລະ ສະຫຼຸບສະພາບການນຳໃຊ້ມາດຕະການບັນຊີສາກົນຂອງທະນາຄານທຸລະກິດ.

ເຈັ້ມແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ,

ຫ້ອງການ

ຄຳແກ້ວ ວິສີສົມບັດ